ມູນນິທິ ອະນຸລັກ ສັດປ່າ ລາວ

ບົດລາຍງານປະຈຳປີ

2020

ສາລະບານ

3 ຄຳນຳ

4 ສູນສັດປ່າ:
ຕົວເລກໃນ ປີ 2020

5 ສູນສັດປ່າ:
ເລື່ອງລາວທີ່ພວກເຮົາມັກທີ່ສຸດໃນ ປີ 2020

13 ຕ້ານອາຊະຍາກຳສັດປ່າ:
ສະຖິຕິການລາຍງານອາຊະຍາກຳສັດປ່າ

14 ຕ້ານອາຊະຍາກຳສັດປ່າ:
ການຮ່ວມມືລະຫວ່າງ EU ແລະ WCS
"ຄູ່ຮ່ວມງານ ເພື່ອຕ້ານອາຊະຍາກຳສັດປ່າ"

18 ຄາດຄະເນແຜນການເຮັດວຽກໃນປີ 2021

19 ຜູ້ໃຫ້ທຶນ ແລະ ຄູ່ຮ່ວມງານຂອງພວກເຮົາ

20 ຊ່ວຍຊີວິດສັດປ່າມື້ນີ້!

21 ຂໍ້ມູນຕິດຕໍ່

ຄຳນຳ

ບັນທຶກຈາກອຳນວຍການຂອງພວກເຮົາ

ໃນປີທີ່ຜ່ານມານີ້ຄົນສ່ວນໃຫຍ່ໃນທົ່ວໂລກໄດ້ດຳລົງຊີວິດດ້ວຍຄວາມຫຍຸ້ງຍາກ. ມັນເປັນສິ່ງໜຶ່ງທີ່ແປກປະຫຼາດ ແລະ ຜິດທຳມະຊາດທີ່ເກີດຂຶ້ນກັບຄົນຈຳນວນຫຼວງຫຼາຍຈົນຮູ້ສຶກໄດ້ວ່າຄົນຈຳນວນນັ້ນກຳລັງສະແດງຢູ່ໃນຮູບເງົາພາບພະຍົນທີ່ໂຫດຮ້າຍປ່າເຖື່ອນ.

ປີ **2020** ຈະເປັນປີໃນປະຫວັດສາດທີ່ຕ້ອງໄດ້ຈາລຶກໄວ້ຢ່າງແນ່ນອນ ເນື່ອງຈາກວ່າເປັນປີທີ່ມີພະຍາດລະບາດກວ້າງຂວາງທີ່ສຸດໃນທົ່ວໂລກ. ວິກິດການດັ່ງກ່າວຈະຖິ້ມເລື່ອງລາວອັນໜ້າເຫຼືອເຊື່ອໄວ້ເຊັ່ນ: ໂຮງໝໍເຕັມໄປດ້ວຍຄົນເຈັບຢ່າງແອອັດ, ສູນເສຍຊີວິດຄົນຈຳນວນຫຼວງຫຼາຍ, ມີການຈຳແນກເຊື້ອຊາດ ແລະ ໄພວ່າງງານທີ່ບໍ່ໄດ້ພົບເຫັນມາເປັນເວລາຫຼາຍທົດສະຕະວັດ, ຄອບຄົວບໍ່ໄດ້ຢູ່ຮ່ວມກັນ ແລະ ຊາຍແດນປະເທດຖືກປິດຜູ້ທີ່ຢາກທ່ອງທ່ຽວກໍ່ບໍ່ສາມາດເດີນທາງໄດ້.

ພະຍາດໂລກລະບາດນີ້ໄດ້ສົ່ງແສງສະຫວ່າງໃຫ້ແກ່ຕະຫຼາດສັດປ່າ ເພາະວ່າການຊື້-ຂາຍສັດປ່າບໍ່ພຽງແຕ່ອັນຕະລາຍຕໍ່ສັດເທົ່ານັ້ນ ແຕ່ຍັງເປັນອັນຕະລາຍຕໍ່ຄອບຄົວ ແລະ ໝູ່ເພື່ອນຂອງພວກເຮົາອີກດ້ວຍ. ຫວັງວ່າສິ່ງດັ່ງກ່າວນີ້ຈະນຳໄປສູ່ການສົນທະນາຫຼາຍຂຶ້ນກ່ຽວກັບຕະຫຼາດເຫຼົ່ານີ້ ແລະ ພວກເຮົາໃນຖານະທີ່ເປັນປະຊາຄົມໂລກຕ້ອງເຮັດວຽກຮ່ວມກັນ ເພື່ອແກ້ໄຂບັນຫານີ້ ແລະ ເຮັດໃຫ້ບັນຫານີ້ມີການປ່ຽນແປງຢ່າງແທ້ຈິງ.

ໂດຍຜ່ານທຸກຄວາມບໍ່ແນ່ນອນ, ຄວາມເສຍຫາຍ ແລະ ຄວາມເຈັບປວດຕະຫຼອດປີທີ່ຜ່ານມາ ສິ່ງສຳຄັນຄືພວກເຮົາຄວນເບິ່ງຄືນບົດຮຽນທີ່ຖອດຖອນໄດ້ ແລະ ປະສົບການໃນແງ່ບວກທີ່ມາພ້ອມກັບປີດັ່ງກ່າວ. ຂ້າພະເຈົ້າຫວັງວ່າບົດລາຍງານປະຈຳປີນີ້ຈະຊ່ວຍໃຫ້ທ່ານເຫັນໄດ້ວ່າ ເຖິງຈະມີວິກິດການຫຼາຍຢ່າງເກີດຂຶ້ນໃນປີ **2020** ແຕ່ພວກເຮົາກໍ່ຍັງສາມາດຍາດໄດ້ໄຊຊະນະຫຼາຍຢ່າງ! ສູນຂອງພວກເຮົາຍັງສາມາດເຕີບໂຕໄດ້ໃນປີນີ້ ຍ້ອນມີຜູ້ສະໜັບສະໜູນ ແລະ ພະນັກງານທີ່ບໍ່ຫວັ່ນໄຫວ ຈຶ່ງເຮັດໃຫ້ພວກເຮົາສ້າງໄດ້ຄອກສັດໃໝ່, ສາມາດສືບຕໍ່ວຽກງານກູ້ໄພ, ບຳບັດຟື້ນຟູ ແລະ ປ່ອຍສັດປ່າ ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ແກ່ໂຄງການການສຶກສາຂອງພວກເຮົາ. ພວກເຮົາຫວັງວ່າໃນປີໜ້ານີ້ຈະເປັນປີທີ່ມີຜົນຫຼາຍທີ່ສຸດ ແລະ ພວກເຮົາກໍ່ລໍຄອຍຈະແບ່ງປັນຫົນທາງຂອງພວກເຮົານັ້ນໃຫ້ກັບທ່ານ!

ສູນສັດປ່າ

ຕົວເລກໃນ ປີ 2020

9 ຄອກສັດໃໝ່

25 ຄອກສັດປັບປຸງ

57 ພະນັກງານ ລາວ

8 ພະນັກງານ ຕ່າງປະເທດ

9 ພັດທະນາອຸປະກອນ ການຕະຫຼາດໃໝ່

390 ສັດຢູ່ໃນສູນ

58 ຊະນິດ

213 ສ່ຽງຕໍ່ການສູນພັນ

16,000+ ໄລນ໌ເຟສບຸກ ໃໝ່

11 ໂຄງການໂຮງຮຽນ

14 ອາສາສະໝັກ

7 ທົວ

55 ສັດທີ່ໄດ້ກູ້ໄພ

18 ສັດທີ່ໄດ້ປ່ອຍ



ລາຍຊື່ຂ້າງເທິງນີ້ແມ່ນຈຳນວນສັດທັງໝົດທີ່ຢູ່ໃນສູນ ວັນທີ 31/12/2020.
ພວກມັນຖືກແບ່ງອອກເປັນປະເພດ ແລະ ລະຫັດສີ ອີງຕາມການຈັດປະເພດໃນບັນຊີແດງຂອງສະຫະພັນອະນຸລັກທຳມະຊາດໂລກ (IUCN).
ສີທີ່ກົງກັນແມ່ນຈຳນວນສັດ, ບໍ່ແມ່ນຈຳນວນສາຍພັນສັດ.

ສູນສັດປ່າ

ເລື່ອງລາວທີ່ພວກເຮົາມັກທີ່ສຸດໃນ ປີ 2020

ຂ່າວໃຫຍ່

ປີກາຍນີ້ສັດທີ່ໃຫຍ່ທີ່ສຸດຂອງພວກເຮົາໄດ້ຮັບການຍົກລະດັບແລ້ວ ຂໍຂອບໃຈອົງການບໍລິການດ້ານສັດຕະວະແພດໂລກ (WVS). ແກ້ວຄູນຊ້າງອາຊີຂອງພວກເຮົາໄດ້ຄອກໃໝ່ແລ້ວ ເຊິ່ງປັດຈຸບັນນີ້ມັນສາມາດໃຊ້ຊີວິດໂດຍບໍ່ຕ້ອງລ່າມໂສ້ແລ້ວ! ເຖິງແມ່ນວ່າໃນເມື່ອກ່ອນມັນເຄີຍຖືກໃຊ້ລາກແກ່ທ່ອນໄມ້ ແລະ ບໍລິການໃຫ້ແຂກຂີ່ກໍ່ຕາມ ແຕ່ປັດຈຸບັນນີ້ແກ້ວຄູນກໍ່ສາມາດໃຊ້ຊີວິດເປັນອິດສະຫຼະ ແລະ ບໍ່ຈຳເປັນຕ້ອງລ່າມໂສ້. ຄວນຊ້າງຍັງພາມັນເລາະກິນຫຍ້າໄປຕາມບໍລິເວນພື້ນທີ່ດ້ານຫຼັງຂອງສູນພວກເຮົາອີກດ້ວຍ. ຖືວ່ານີ້ເປັນຜົນສຳເລັດອັນຍິ່ງໃຫຍ່ສຳລັບຊີວິດການເປັນຢູ່ຂອງສັດທີ່ສວຍງາມໂຕນີ້.

ພົບກັບ Toasty!

Toasty ແມ່ນລີງຫາງຍາວໂຕໜຶ່ງທີ່ໄດ້ອາໄສຢູ່ໃນໝູ່ບ້ານໃກ້ຄຽງເປັນເວລາຫຼາຍເດືອນ ແລະ ປະຊາຊົນໃນເຂດບ້ານດັ່ງກ່າວກໍ່ບໍ່ຮູ້ວ່າມັນມາຈາກໃສ ເພາະວ່າບໍລິເວນນັ້ນກໍ່ບໍ່ມີປະຊາກອນສັດສາຍພັນນີ້. ຊາວບ້ານກໍ່ໄດ້ພະຍາຍາມຈັບເອົາຕົວມັນ ເພື່ອຍ້າຍມັນໄປຢູ່ບ່ອນອື່ນ ແຕ່ກໍ່ບໍ່ປະສົບຜົນສຳເລັດ ແລະ ສຸດທ້າຍມັນກໍ່ພົບກັບເຄາະຮ້າຍຖືກໄຟຟ້າຊັອກ.

ທີມງານກູ້ໄພສັດປ່າຂອງພວກເຮົາກໍ່ຮີບຟ້າວລົງໄປຊ່ວຍເຫຼືອມັນ ແລະ ໄດ້ນຳເອົາມັນມາທີ່ສູນ ເຊິ່ງມັນກໍ່ໄດ້ຮັບການເບິ່ງແຍງຕະຫຼອດເວລາ ເພື່ອປິ່ນປົວບາດແຜໄຟໄໝ້ຢ່າງຮຸນແຮງ ແລະ ບາດແຜອື່ນໆຕາມຕົນໂຕຂອງມັນ.
ການປິ່ນປົວຮັກສາ ແລະ ບຳບັດຟື້ນຟູມັນ ໄດ້ໃຊ້ເວລາຫຼາຍກວ່າ 8 ເດືອນ ປັດຈຸບັນນີ້ມັນກໍ່ໄດ້ເຂົ້າໄປຢູ່ຮ່ວມກັບຝູງລີງຫາງຍາວໃນສູນຂອງພວກເຮົາແລ້ວ ແລະ ມີສຸຂະພາບແຂງແຮງດີອີກດ້ວຍ!

ສູນສັດປ່າ

ເລື່ອງລາວທີ່ພວກເຮົາມັກທີ່ສຸດໃນ ປີ 2020

ງານວາງສະແດງແນວທາງການພັດທະນາການທ່ອງທ່ຽວແບບຍືນຍົງອາຊຽນ!

ພວກເຮົາຮູ້ສຶກຕື່ນເຕັ້ນຫຼາຍໃນປີນີ້ທີ່ໄດ້ຮັບເຊີນໃຫ້ຈັດລ້ອກໜຶ່ງເປັນບ່ອນສົນທະນາໃນງານວາງສະແດງແນວທາງການພັດທະນາການທ່ອງທ່ຽວແບບຍືນຍົງ ເຊິ່ງໄດ້ຈັດຂຶ້ນຢູ່ທີ່ໂຮງແຮມ ຄຣາວພລາຊ່າ ວຽງຈັນ. ພວກເຮົາໄດ້ພົບປະກັບຜູ້ຈຳໜ່າຍສິນຄ້າຫຼາຍທ່ານທີ່ເຮັດວຽກ ເພື່ອພັດທະນາປະເທດລາວໃຫ້ດີຂຶ້ນພ້ອມທັງແບ່ງປັນວຽກທີ່ພວກເຮົາເຮັດ ເພື່ອຊ່ວຍຊີວິດສັດປ່າລາວ.

ການຈັດສົ່ງເຄື່ອງຂອງອາລີຊີເມນຂະໜາດໃຫຍ່ຂອງ VIS

ໜຶ່ງໃນໂຄງການທີ່ພວກເຮົາມັກທີ່ສຸດແມ່ນການເຮັດວຽກຮ່ວມກັບນັກຮຽນທີ່ໂຮງຮຽນນານາຊາດວຽງຈັນ (VIS). ໃນຊ່ວງຫຼາຍປີທີ່ຜ່ານມານັກຮຽນຂອງໂຮງຮຽນນີ້ໄດ້ເຂົ້າມາຢ້ຽມຢາມສູນຂອງພວກເຮົາ ເພື່ອຮຽນຮູ້ກ່ຽວກັບເລື່ອງລາວຂອງສັດປ່າຂອງພວກເຮົາ. ຫຼັງຈາກນັ້ນພວກເຂົາກໍ່ໄດ້ນຳອາຂໍ້ມູນດັ່ງກ່າວກັບຄືນໄປສ້າງເຄື່ອງອາລີຊີເມນພິເສດທີ່ເໝາະສົມກັບພຶດຕິກຳຂອງສັດປ່າແຕ່ລະໂຕ!

ເລື່ອງລາວທີ່ໄດ້ຮັບ"ເຜັດໜ້ອຍ"

Ped Noi ໃນພາສາລາວໝາຍເຖິງ "ເຜັດໜ້ອຍ" ເຊິ່ງເປັນທະນີນ້ອຍໂຕໜຶ່ງທີ່ໄດ້ກູ້ໄພມາຈາກ ແຂວງ ຜົ້ງສາລີ ພາກເໜືອຂອງປະເທດລາວ. ທັນທີທີ່ພວກເຮົາໄດ້ຮັບລາຍງານມາທາງເຟສບຸກ ພະນັກງານຄົນໜຶ່ງຂອງພວກເຮົາກໍ່ໄດ້ໄປ "ແອບອ້າງ" ເພື່ອເກັບກຳຂໍ້ມູນເພີ່ມເຕີມຈາກຜູ້ຂາຍ.

ຫຼັງຈາກໄດ້ຂໍ້ມູນທຸກຢ່າງແລ້ວພວກເຮົາໄດ້ລາຍງານໃຫ້ກອງກວດກາປ່າໄມ້ແຂວງ ແລະ ກອງກວດການັ້ນກໍ່ໄດ້ຕິດຕໍ່ຫາຜູ້ຂາຍ ແລະ ເຂົ້າພົບຜູ້ກ່ຽວ ເພື່ອຍຶດເອົາທະນີແກ້ມຂາວຖິ່ນເໜືອທີ່ໃກ້ຈະສູນພັນຢ່າງຍິ່ງໂຕນີ້.

Ped Noi ມີສຸຂະພາບແຂງແຮງດີ ແລະ ເມື່ອບໍ່ດົນມານີ້ມັນກໍ່ໄດ້ເຂົ້າໄປຢູ່ຮ່ວມກັບທະນີໂຕໜຶ່ງທີ່ຢູ່ໃນສູນຂອງພວກເຮົາຊື່ວ່າ: Eeoo ແລະ ນັບຕັ້ງແຕ່ນັ້ນມາພວກມັນທັງສອງກໍ່ແຍກອອກຈາກກັນບໍ່ໄດ້. ເຖິງແມ່ນວ່າໂດຍປົກກະຕິແລ້ວທະນີເປັນສັດທີ່ຢູ່ໂດດດ່ຽວ ຫຼື ຢູ່ເປັນຄູ່ໃນທຳມະຊາດ ແຕ່ມັນກໍ່ເປັນສິ່ງທີ່ສຳຄັນສຳລັບພວກມັນທີ່ຈະຕ້ອງໄດ້ "ຮຽນຮູ້" ວິທີການເປັນທະນີເຊິ່ງ ກັນ ແລະ ກັນ ເພື່ອໃຫ້ພວກມັນມີຄວາມຫວັງໃນການກັບຄືນສູ່ທຳມະຊາດ!

ສູນສັດປ່າ

ເລື່ອງລາວທີ່ພວກເຮົາມັກທີ່ສຸດໃນ ປີ 2020

ກອງປະຊຸມກ່ຽວກັບການກູ້ໄພສັດປ່າໃນລາວ

ພວກເຮົາໄດ້ຈັດກອງປະຊຸມຮ່ວມກັບຫົວໜ້າກົມປ່າໄມ້ ແລະ ຫົວໜ້າກົມກວດກາປ່າໄມ້ ເພື່ອເສີມສ້າງຄວາມເຂັ້ມແຂງໃນການຮ່ວມມືກັບສອງອົງການຈັດຕັ້ງລັດຖະບານດັ່ງກ່າວໃຫ້ດີຂຶ້ນໃນເມື່ອມີການກູໄພສັດປ່າລາວ, ບຳບັດຟື້ນຟູ ແລະ ປ່ອຍຄືນສູ່ທຳມະຊາດ.

ກູ້ໄພສັດປ່າຈຳນວນຫຼາຍກວ່າ 30 ໂຕ!

ພວກເຮົາໄດ້ຮັບລາຍງານກ່ຽວກັບສັດປ່າຫຼາຍຊະນິດທີ່ຖືກປະກາດຂາຍໃນເຟສບຸກ ເຊິ່ງລວມມີ: ລີງລົມ, ລີງນ້ອຍ, ອົ້ນ, ເຕົ່ານໍ້າ, ເຕົ່າບົກ ແລະ ເຫງັນອີ່ຕົ້ນ.

ພະນັກງານຂອງພວກເຮົາສາມາດເກັບກຳໄດ້ຂໍ້ມູນກ່ຽວກັບທີ່ຢູ່ຂອງຜູ້ປະກາດຂາຍສັດດັ່ງກ່າວ ສະນັ້ນ, ພວກເຮົາຈຶ່ງໄດ້ແຈ້ງໃຫ້ກອງກວດກາປ່າໄມ້ແຂວງ ແລະ ທາງເຈົ້າໜ້າທີ່ກອງກວດການັ້ນກໍ່ໄດ້ເຂົ້າໄປຍຶດເອົາສັດປ່າດັ່ງກ່າວ. ພວກເຮົາກໍ່ດີໃຈຫຼາຍຈະແຈ້ງໃຫ້ຊາບວ່າ ຫຼັງຈາກພວກເຮົາໄດ້ໄປກູ້ໄພສັດຈຳນວນນັ້ນມາ ພວກເຮົາກໍ່ສາມາດປ່ອຍສັດຈຳນວນນັ້ນຫຼາຍຊະນິດກັບຄືນສູ່ທຳມະຊາດ!

ຄ່າງໄດ້ຮັບການຍົກລະດັບແລ້ວ!

ຂໍຂອບໃຈສຳລັບທຶນຊ່ວຍເຫຼືອທີ່ໄດ້ຮັບຈາກໂປຼແກຼມອາສາສະໝັກຂອງພວກເຮົາ ເຊິ່ງເຮັດໃຫ້ພວກເຮົາສາມາດສ້າງໄດ້ຄອກໃໝ່ໃຫ້ຄ່າງສອງໂຕຂອງພວກເຮົາ!

ຄອກດັ່ງກ່າວນີ້ມີພື້ນທີ່ກວ້າງຂວາງໃຫ້ພວກມັນກະໂດດຫຼິ້ນໄປມາ, ຊອກຫາອາຫານ ແລະ ເພີດເພີນໄປກັບອາກາດສົດ!

ຄອກນີ້ບໍ່ພຽງແຕ່ໃຊ້ຮອງຮັບສະເພາະໂຕຄ່າງເທົ່ານັ້ນ ແຕ່ຍັງຈະໃຊ້ຮອງຮັບສັດປ່າໂຕອື່ນໆທີ່ພວກເຮົາກູ້ໄພມາໃນອະນາຄົດອີກດ້ວຍ ເພາະວ່າສັດປ່າທີ່ຢູ່ໃນສູນຂອງພວກເຮົາມີການເພີ່ມຂຶ້ນ ເນື່ອງຈາກສັດປ່າບາງໂຕບໍ່ສາມາດປ່ອຍກັບຄືນສູ່ປ່າ.

ສູນສັດປ່າ

ເລື່ອງລາວທີ່ພວກເຮົາມັກທີ່ສຸດໃນ ປີ 2020

ຄົນລາວຜູ້ທໍາອິດທີ່ຝຶກອົບຮົມສັດຕະວະແພດກັບພວກເຮົາ

ປີນີ້ພວກເຮົາຮູ້ສຶກພູມໃຈຫຼາຍທີ່ໄດ້ຊ່ວຍສັດຕະວະແພດຄົນໜຶ່ງມາຈາກ Free the bears ຮຽນຮູ້ເພີ່ມເຕີມກ່ຽວກັບສັດປ່າສາຍພັນຕ່າງໆ ແລະ ຝຶກອົບຮົມຮ່ວມກັບສັດຕະວະແພດຂອງພວກເຮົາເປັນເວລາໜຶ່ງອາທິດ. ບໍ່ແມ່ນແຕ່ລາວເທົ່ານັ້ນທີ່ມາຝຶກອົບຮົມນໍາພວກເຮົາ ພວກເຮົາຍັງມີນັກສຶກສາສັດຕະວະແພດຄົນລາວໜຶ່ງຄົນເຂົ້າມາຝຶກກັບພະນັກງານຂອງພວກເຮົາໃນມື້ວັນເສົາ ແລະ ວັນອາທິດເປັນເວລາສອງເດືອນອີກດ້ວຍ. ພວກເຮົາຮູ້ສຶກຕື່ນເຕັ້ນຈະສືບຕໍ່ການຝຶກອົບຮົມແບບນີ້ໃຫ້ສັດຕະວະແພດລາວເຮົາ ແລະ ຫວັງວ່າຈະໄດ້ເປີດໂຄງການນີ້ໃຫ້ກວ້າງຂຶ້ນໃນປີ 2021 ເພື່ອຈະໄດ້ຊ່ວຍຝຶກອົບຮົມສັດຕະວະແພດລາວເຮົາໃນອະນາຄົດ.

ໄຊຊະນະອັນຍິ່ງໃຫຍ່ສໍາລັບ Red!

ໃນປີນີ້ພວກເຮົາສາມາດກວດຫາເຊື້ອພະຍາດຢູ່ໃນໂຕສັດໄດ້ຫຼາຍຂຶ້ນຕື່ມ ຍ້ອນວ່າພວກເຮົາມີການຮ່ວມມືກັບສູນການແພດບົ່ງມະຕິພະຍາດສາກົນໃນນະຄອນຫຼວງວຽງຈັນ. ສິ່ງດັ່ງກ່າວນີ້ໄດ້ເຮັດໃຫ້ພວກເຮົາສາມາດບົ່ງມະຕິພະຍາດ ແລະ ປິ່ນປົວໄດ້ Red, ລີງວອກ. Red ໄດ້ມີອາການລົ້ມປ່ວຍໃນຊ່ວງສອງປີທີ່ຜ່ານມາ ແຕ່ພວກເຮົາບໍ່ສາມາດບົ່ງມະຕິພະຍາດ ຈົນມາເຖິງປັດຈຸບັນຈຶ່ງສາມາດບົ່ງມະຕິໄດ້. ການປິ່ນປົວຮັກສາ Red ໄດ້ໃຊ້ເວລານານກວ່າ 4 ເດືອນ ແລະ ບໍ່ພຽງແຕ່ກິນຢາເທົ່ານັ້ນ ແຕ່ຍັງໄດ້ຮັບການສັກຢາອີກດ້ວຍ ເຊິ່ງມັນກໍ່ໃຫ້ສັກ ໂດຍບໍ່ໄດ້ບັງຄັບ. ປັດຈຸບັນນີ້ Red ຫາຍດີເປັນປົກກະຕິ ແລະ ກໍ່ໄດ້ເຂົ້າໄປຢູ່ກັບຝູງຂອງມັນແລ້ວ!

ບິນໄດ້ສູງ!

ຂໍຂອບໃຈສໍາລັບທຶນຊ່ວຍເຫຼືອຈາກ Hong Kong Bird Watching Society ພວກເຮົາຈຶ່ງສາມາດກໍ່ສ້າງໄດ້ຄອກບໍາບັດນົກພິເສດນີ້ໄວ້ສໍາລັບບໍາບັດຟື້ນຟູນົກຊະນິດຕ່າງໆທີ່ພວກເຮົາກູ້ໄພມາໃນສູນມູນນິທິນີ້. ຄອກລ້ອມດ້ວຍຕາໜ່າງອ່ອນ, ມີທາງບິນເປັນແບບວົງວຽນ ເພື່ອກະຕຸ້ນໃຫ້ນົກບິນໄດ້ຢ່າງຕໍ່ເນື່ອງ ແລະ ບິນຂຶ້ນສູງ. ສິ່ງດັ່ງກ່າວນີ້ສໍາຄັນຫຼາຍສໍາລັບນົກຂອງພວກເຮົາ ເພາະຈະເປັນການເສີມສ້າງໃຫ້ກ້າມເນື້ອຂອງນົກແຂງແຮງ ກ່ອນທີ່ຈະນໍາໄປປ່ອຍກັບຄືນສູ່ປ່າ.

ສູນສັດປ່າ

ເລື່ອງລາວທີ່ພວກເຮົາມັກທີ່ສຸດໃນ ປີ 2020

ປິດການແບ່ງແຍກ

ໜຶ່ງໃນເປົ້າໝາຍຫຼັກຂອງ ມູນນິທິ ອະນຸລັກ ສັດປ່າ ລາວ ແມ່ນເພື່ອພັດທະນາດ້ານອາຊີບໃຫ້ພະນັກງານລາວ ລວມທັງເຊື່ອມໂຍມຊ່ອງວ່າງລະຫວ່າງພະນັກງານລາວ ແລະ ພະນັກງານຕ່າງປະເທດ. ປີນີ້ພວກເຮົາສາມາດຍ້າຍ ນາງ ສົມຄິດ ຈາກທີມງານລ້ຽງລີງມາຮ່ວມງານກັບທີມງານສັດຕະວະແພດ ເຊິ່ງລາວກໍ່ໄດ້ຮັບການຝຶກອົບຮົມວຽກໃນຝັນຂອງລາວໃຫ້ເປັນຜູ້ຊ່ວຍສັດຕະວະແພດ. ນອກນີ້, ພວກເຮົາຍັງສາມາດຍ້າຍ ທ້າວ ຜົງ ມາຮ່ວມງານກັບທີມງານເຮັດອາລີຊີເມນ ແລະ ລ້ຽງດູສັດປ່າຂອງພວກເຮົາ ເຊິ່ງລາວກໍ່ໄດ້ສ້າງຄວາມແຕກຕ່າງຢ່າງແທ້ຈິງໃຫ້ກັບສັດປ່າທຸກໂຕທີ່ຢູ່ພາຍໃຕ້ການລ້ຽງດູຂອງລາວ.

ໂຮງໝໍສັດປ່າເພີ່ມຂະໜາດເປັນສອງເທົ່າແລ້ວ!

ມູນນິທິ ອະນຸລັກ ສັດປ່າ ລາວ ໄດ້ຮັບການສະໜັບສະໜູນຈາກສະຖານທູດອັງກິດໃນຫຼາຍໂຄງການທີ່ຜ່ານມາ ແລະ ປີກາຍນີ້ກໍ່ໄດ້ຮັບການສະໜັບສະໜູນເຊັ່ນດຽວກັນ. ການທຸ່ມເທເຂົ້າໃນວຽກງານການອະນຸລັກຂອງສະຖານທູດອັງກິດໄດ້ເຮັດໃຫ້ພວກເຮົາສາມາດເສີມສ້າງຄວາມເຂັ້ມແຂງໃຫ້ໂຮງໝໍສັດປ່າຂອງພວກເຮົາ ໂດຍການຂະຫຍາຍພື້ນທີ່ຂອງໂຮງໝໍອອກເປັນສອງເທົ່າ ເພື່ອໃຫ້ມີຫ້ອງຊ່ອງໄຟຟ້າ, ຫ້ອງເອໂກ່, ຫ້ອງຟື້ນຟູສັດຂະໜາດນ້ອຍ, ຫ້ອງຜ່າຕັດ ແລະ ຫ້ອງກວດເຊັກຊີ້ນເນື້ອ. ທີມງານສັດຕະວະແພດຂອງພວກເຮົາກຳລັງຫຍຸ້ງຢູ່ກັບການຈັດເຕີມເຄື່ອງມື ແລະ ອຸປະກອນທາງການແພດຫຼາຍຢ່າງເຂົ້າໃນຈຳພວກຫ້ອງດັ່ງກ່າວ ເພື່ອຮັບປະກັນວ່າພວກເຮົາໃຫ້ການປິ່ນປົວຮັກສາທີ່ດີທີ່ສຸດແກ່ສັດປ່າທຸກໂຕທີ່ພວກເຮົາກູ້ໄພຢູ່ໃນປະເທດລາວນີ້. ພາບທີ່ຢູ່ເບື້ອງຊ້າຍແມ່ນຫ້ອງຜ່າຕັດທີ່ຫາກໍ່ສ້າງຂຶ້ນມາໃໝ່!

ປ່ອຍເກັດແລ້ວ

ພວກເຮົາເລີ່ມກ້າວເຂົ້າສູ່ປີ 2020 ດ້ວຍການປ່ອຍລິ່ນຄວາຍພິເສດສອງໂຕ. ລິ່ນພວກນີ້ມີເລື່ອງລາວທີ່ແຕກຕ່າງກັນ ເນື່ອງຈາກວ່າມີໂຕໜຶ່ງຖືກພົບເຫັນຫຼົງເຂົ້າມາໃນບໍລິເວນສະຖານທູດແຫ່ງໜຶ່ງໃນນະຄອນຫຼວງວຽງຈັນ ແລະ ອີກໂຕໜຶ່ງແມ່ນຍຶດມາຈາກຜູ້ລັກລອບລ່າສັດປ່າ. ເຖິງພວກມັນຈະມີເລື່ອງລາວເປັນຢ່າງໃດກໍ່ຕາມ ແຕ່ສຸດທ້າຍພວກມັນກໍ່ພົບກັບຫົນທາງ ກັບຄືນເຂົ້າສູ່ປ່າບ່ອນທີ່ພວກມັນສາມາດຂຸດຂຸມ, ປີນຂຶ້ນຕົ້ນໄມ້, ຊອກຫາໄດ້ມົດ ແລະ ປວກເປັນອາຫານ.

ສູນສັດປ່າ

ເລື່ອງລາວທີ່ພວກເຮົາມັກທີ່ສຸດໃນ ປີ 2020

ກຸ່ມເດຊີ່, ກຸ່ມບຣາວນີ່ ແລະ ກຸ່ມຈູເນຍ!

ປີນີ້ພວກເຮົາດີໃຈຫຼາຍທີ່ນັກຮຽນກຸ່ມນີ້ໄດ້ຕັດສິນໃຈເຂົ້າມາຢ້ຽມຢາມສູນນີ້. ພວກເຂົາໄດ້ຮຽນຮູ້ທຸກຢ່າງກ່ຽວກັບສັດປ່າ ແລະ ສິ່ງທີ່ພວກເຂົາສາມາດເຮັດໄດ້ ເພື່ອຮັບປະກັນໃຫ້ສັດປ່າທີ່ພວກເຂົາໄດ້ພົບເຫັນນັ້ນຄົງຕົວຢູ່ກັບຄົນຮຸ່ນຫຼັງ. ນອກນີ້, ພວກເຂົາຍັງໄດ້ເຮັດອາລີຊີເມນບາງຢ່າງໃຫ້ໝີ 25 ໂຕຂອງພວກເຮົາ ເຊິ່ງເປັນສັດທີ່ພວກເຂົາຮັກແທ້ໆ!

ພະຍາຍາມເພື່ອຄວາມດີເລີດ

ມູນນິທິ ອະນຸລັກ ສັດປ່າ ລາວ ໄດ້ກໍ່ສ້າງຄອກບຳບັດສັດທຳອິດຂຶ້ນໃນປີ 2018. ມາໃນປີນີ້ພວກເຮົາຍັງສາມາດປັບປຸງໄດ້ຄອກບຳບັດດັ່ງກ່າວ ຂໍຂອບໃຈ Phoenix Zoo ທີ່ໄດ້ບໍລິຈາກ ແລະ ສົ່ງພະນັກງານຄົນໜຶ່ງເຂົ້າມາຊ່ວຍເຫຼືອພວກເຮົາ! Shelly Donohue ພະນັກງານລ້ຽງສັດຄົນໜຶ່ງຂອງ Phoenix Zoo ທີ່ໄດ້ເຂົ້າມາໃນສູນຂອງພວກເຮົາ ແລະ ໄດ້ໃຊ້ເວລາສອງອາທິດ ເພື່ອຮຽນຮູ້ກ່ຽວກັບສິ່ງທີ່ພວກເຮົາເຮັດຢູ່ໃນສູນນີ້ ແລະ ລາວກໍ່ໄດ້ຊ່ວຍປັບປຸງຄອກບຳບັດຟື້ນຟູສັດຂອງພວກເຮົາ ໂດຍການສ້າງຜ້າບັງຕົນໂຕ ແລະ ຮາງເກື້ອອາຫານ ເພື່ອຫຼຸດຜ່ອນບໍ່ໃຫ້ສັດທີ່ຢູ່ໃນຄອກບຳບັດນັ້ນມີການສຳຜັດກັບຄົນເຮົາ.

ສູນພັດທະນາແມ່ຍິງພິການລາວ

ສູນພັດທະນາແມ່ຍິງພິການລາວໄດ້ຊ່ວຍໃຫ້ແມ່ຍິງພິການມີລາຍໄດ້ ແລະ ພວກເຮົາກໍ່ຍິນດີທີ່ໄດ້ຮ່ວມມືກັບພວກເຂົາໃນການຜະລິດຖົງໄພໃຫ້ ມູນນິທິ ອະນຸລັກ ສັດປ່າ ລາວ ເຊິ່ງຖົງດັ່ງກ່າວແມ່ນເຮັດມາຈາກວັດສະດຸລີໄຊເຄີນ..

ອາລີຊີເມນກະຕ່າຍຂອງ VIS

ໜຶ່ງໃນໂຮງຮຽນທີ່ພວກເຮົາມັກຮ່ວມມືກັນເລື້ອຍໆແມ່ນ: ໂຮງຮຽນນານາຊາດວຽງຈັນ (VIS). ໜຶ່ງໃນໂຄງການທີ່ພວກເຮົາໄດ້ເຮັດໃນປີນີ້ແມ່ນການສອນຫ້ອງປີທຳອິດກ່ຽວກັບອາລີຊີເມນ! ດັ່ງນັ້ນ, ພວກເຮົາຈຶ່ງໄດ້ເຮັດອາລີຊີເມນແບບມ່ວນໆ ແລະ ປອດໄພບາງຢ່າງໃຫ້ກະຕ່າຍສອງໂຕຂອງພວກເຂົາເພື່ອເຮັດໃຫ້ກະຕ່າຍນັ້ນບໍ່ລຳຄານໃນຕອນກາງເວັນ.

ສູນສັດປ່າ

ເລື່ອງລາວທີ່ພວກເຮົາມັກທີ່ສຸດໃນ ປີ 2020

ຜູ້ຝຶກງານດ້ານ H&E ຄົນທຳອິດຂອງພວກເຮົາ

ພວກເຮົາຍິນດີຕ້ອນຮັບຜູ້ຝຶກງານດ້ານການເຮັດອາລິຊີເມນ ແລະ ການລ້ຽງດູສັດປ່າຄົນທຳອິດຂອງພວກເຮົາໃນປີນີ້! Gillian ແມ່ນນັກສຶກສາຂອງ Northeastern University Co-op program ແລະ ຄາດວ່າລາວຈະໄດ້ຢູ່ກັບພວກເຮົາຈົນເຖິງ ເດືອນ ພຶດສະພາ ແຕ່ໂຊກຮ້າຍ ຍ້ອນມີໂລກລະບາດເກີດຂຶ້ນ ລາວຈຶ່ງຈຳເປັນຕ້ອງໄດ້ອອກເດີນທາງກ່ອນ.

ພວກເຮົາຫວັງວ່າໃນອະນາຄົດຈະໄດ້ມີໂອກາດຮັບນັກສຶກສາຝຶກງານຫຼາຍຂຶ້ນ ເພາະວ່າມັນຈະເປັນການເປີດໂອກາດໃຫ້ນັກສຶກສາໄດ້ເຮັດວຽກຢູ່ໃນສູນບ່ອນທີ່ພວກເຂົາຈະໄດ້ເຫັນວຽກງານແນວໜ້າໃນການອະນຸລັກສັດປ່າ!

ສົ່ງເສີມຄວາມຍືນຍົງ

ກໍ້ດູດໄມ້ໄຜ່ກຳລັງໄດ້ຮັບຄວາມນິຍົມທົ່ວໂລກ ເນື່ອງຈາກວ່າມັນເປັນວິທີແບບຍືນຍົງໃນການດື່ມເຄື່ອງດື່ມທີ່ທ່ານມັກ! ຂໍຂອບໃຈບໍລິສັດກໍ້ດູດໄມ້ໄຜ່ລາວທີ່ໄດ້ບໍລິຈາກກໍ້ດູດຈຳນວນຫຼວງຫຼາຍມາໃຫ້ສູນຂອງພວກເຮົາມອບໃຫ້ໂຮງຮຽນທ້ອງຖິ່ນຂອງພວກເຮົາ ເພື່ອເປັນການຊ່ວຍສົ່ງເສີມຄວາມຍືນຍົງ.

ຄອກເຝົ້າລະວັງການຕິດເຊື້ອສຳລັບສັດຂະໜາດນ້ອຍ

ຂໍຂອບໃຈໂຄງການ ການຮ່ວມມືກັບ EU ແລະ WCS ຈຶ່ງເຮັດໃຫ້ພວກເຮົາສາມາດເພີ່ມໄດ້ຄອກເຝົ້າລະວັງການຕິດເຊື້ອຂອງພວກເຮົານີ້ ເພື່ອໃຫ້ມີຄວາມປອດໄພໃນການກັກສັດທີ່ມີຂະໜາດນ້ອຍ. ພວກເຮົາກໍ່ໄດ້ໃຊ້ຄອກນີ້ມາກັກສັດເລືອຄານຫຼາຍຊະນິດແລ້ວ ແລະ ມັນກໍ່ໄດ້ຮັບຜົນດີ!

ສູນສັດປ່າ

ເລື່ອງລາວທີ່ພວກເຮົາມັກທີ່ສຸດໃນ ປີ 2020



Successful treatment of suspected gastro-intestinal ulceration and parasitism in a rescued Chinese pangolin (*Manis pentadactyla*)

Marta Pereira[1], Gareth Jones[1]
1- Lao Conservation Trust for Wildlife (LCTW), Namak Village, Ban Keun, Thoulakhom District, Vientiane Province, Lao PDR; martancp@gmail.com

INTRODUCTION

Chinese pangolins (*Manis pentadactyla*) are a critically endangered species[1]. In captivity, pangolins are known to have low survival rates and to be prone to develop gastro-intestinal ulceration[2,3]. Because it is projected that the species will experience further population declines due to indiscriminate hunting and poaching[1], a better understanding on how to improve their health care and welfare in captivity may be key to the species' conservation.

In August 2018, a sub-adult female Chinese pangolin (Fig. 1) was admitted into the Lao Conservation Trust for Wildlife – LCTW after confiscation from the illegal wildlife trade. We will present the treatment instated upon development of clinical signs compatible with gastro-intestinal ulceration.

Fig.1 – Sub-adult Chinese Pangolin on arrival to LCTW

CASE PRESENTATION

Approximately one month after arrival, mild diarrhoea was noted. Faecal flotation evidenced a moderate burden of nematode eggs (Fig. 2) that persisted after initial treatment with ivermectin. Eighteen days later, the patient presented acutely lethargic, anorexic and with emetic episodes containing live nematodes. Its clinical status deteriorated, with severe lethargy and anorexia, melena and necrotising gastro-enteritis.

Abdominal ultrasound evidenced hypermotility but no free fluid; blood analysis showed hypoproteinaemia, hypoalbuminaemia, anaemia and leucocytosis. Findings were found to be consistent with gastro-intestinal ulceration and therapy was instated as described in Table 1. The patient relapsed after antibiotherapy was discontinued, metronidazole was reinitiated for an extended course. Appetite, demeanour and faeces improved again and returned to normal within six days. Once food intake was consistent, cimetidine and sucralfate were changed to oral administration. Following 28 days of treatment, clinical signs had resolved. Six subsequent coprological analysis over the following four weeks showed no evidence of parasitism.

Fig.2 – Nematode eggs evidenced by faecal flotation. (Magnification x 100)

Table 1

Date	Clinical presentation	Treatment
Arrival day	NAD	Ivermectin - 0.2 mg/Kg, SC, SD
Day 1 (approx. one month after arrival)	Mild diarrhoea; faecal flotation – moderate burden nematode eggs	Ivermectin - 0.2 mg/Kg, SC, SD Scheduled faecal and repeat dose in 2 weeks
Day 5	No diarrhoea; mild burden of nematode eggs	—
Day 19	Lethargy, anorexia, vomit with live nematodes, abdominal discomfort, normal temperature (33.5 °C); faecal floatation – mild burden of nematode eggs, numerous linear motile protozoa	Ivermectin - 0.2 mg/Kg, SC, SD Cimetidine - 5 mg/Kg, SC, BID Tramadol - 2 mg/kg SC, BID Metoclopramide - 0.5 mg/kg SC, BID Amoxicillin-clavulanate - 10 mg/kg SC, SID, 8 days Ringer-lactate with 5% glucose - 60mL SC, BID Metronidazole - 25 mg/Kg, PO - **refused**
Day 20	Anorexia, further lethargy, live nematodes in diarrhoea	Light sedation: Diazepam - 1 mg/Kg, IM Oro-gastric intubation: Water - 10 mL, SD Praziquantel - 20mg/kg PO, SD Albendazole - 20mg/kg PO, SD Metronidazole - 10 mg/kg SC, BID (in 1.66 mg/mL solution) Cimetidine - **increased to** 10 mg/Kg, SC, BID Tramadol - **discontinued** – concerns over sedative effect Fluid bolus - 10-25 mL IV BID to TID, following 48h
Day 21	Stupor, mucoid faeces, with melena and gastro-intestinal mucosa	Oro-gastric intubation: Sucralfate 50mg/kg PO, SID
Day 22	Abdominal ultrasound: no free fluid; gastro-intestinal hypermotility Blood analyses: Hypoproteinaemia; hypoalbuminemia (2.6 g/dL); anaemia (HTC 37%); leucocytosis (11.3 x 10^9/L) by neutrophilia (78%)	no changes - maintained metronidazole, amoxicillin-clavulanate, metoclopramide, cimetidine and sucralfate
Day 23	Acceptance of small amounts of food without vomit	Metoclopramide **withdrawn** Sucralfate **increased** to BID, PO w/out oro-gastric intubation
Day 27	Improved appetite, demeanour; normal faeces, negative faecal flotation	Amoxicillin-clavulanate **discontinued** Metronidazole **discontinued** Oro-gastric intubation: Sucralfate - 50mg/kg PO, SID - rejection of prior 3 doses
Day 28	Anorexia, diarrhoea	—
Day 29	Lethargy; anorexia; vomiting with live nematodes; hypoglycaemia (3.3 mmol/L)	Fluids with 5% glucose - 20 mL SC, BID, 3 doses Metoclopramide - 0.5mg/kg SC, TID, following 48 hours Metronidazole - **re-instated** - Previous dose, for 14 consecutive additional days
Day 30	Lethargy, anorexia	Sedation: diazepam + ketamine - 1mg/kg + 5mg/kg IM Orogastric intubation: Albendazole - 20mg/kg PO Hills a/d - 10 mL Water - 4 mL Cimetidine and sucralfate maintained
Day 33	Negative faecal flotation	Ivermectine - 0.2 mg/Kg SC
Day 36	Normal appetite, demeanour and faeces	Cimetidine - **changed route** to PO, continued until total 28 d Sucralfate - **maintained** PO BID, without oro-gastric intubation until 28d total After 28 d, these were gradually decreased and then discontinued

DISCUSSION

As is common with many wildlife species, the lack of data and literature complicates clinical management more so than with domestic species. This is further complicated by limited resources and lack of expertise in range countries such as Lao PDR.

Interpretation of blood results is hindered by the limited baseline data. Haematology and blood biochemistry reference ranges have been published for the species[4]. However, because the study sampled all rescued animals with no apparent disease, it is possible both unhealthy and dehydrated animals were included, resulting in wide reference ranges, as is the case of the reported haematocrit range (18-53%). Because the patient was dehydrated, she was considered likely mildly anaemic.

Diagnosis of this case was made based on clinical signs and species history of being prone to developing gastric ulceration in captivity[2,3]. While the clinical presentation was highly suggestive, the lack of further diagnostic tests such as endoscopy or histopathology of the defecated gastro-intestinal mucosa, makes it impossible to confirm the presence of ulcers and their location in the gastro-intestinal tract. The etiology of this condition is thought to be stress-related[3], so care was taken to balance appropriate treatment with avoidance of excessive stress through handling and medical administrations.

The ventral tail vein was used to administer fluid-therapy and collect a blood sample. However, repeated IV administration was impossible. In veterinary practice, metronidazole has been anecdotally reported to cause local inflammation and necrosis when peri-vascular infiltration occurs. The difficult oral administration and IV access, prompted the sub-cutaneous administration in a diluted form, under expert advisement. Although manual restraint was necessary and the volume had to be distributed in two sites on the ventral aspect of the animal due to limited dorsal sub-cutaneous space, no adverse reactions were ever observed.

The patient recovered and has been healthy ever since. While some drugs have been suggested to treat early-stage ulcers in pangolins[3], to the authors' knowledge, this is the first report of a full clinical case where gastro-intestinal ulceration was successfully managed in this species.

REFERENCES
1- Challender, D., Wu, S., Kaspal, P., Khatiwada, A., Ghose, A., Ching-Min Sun, N., Mohapatra, R. K. And Laxmi Suwal, T. 2019 "Manis Pentadactyla." The IUCN Red List of Threatened Species.
2- Chin, S. C., Liu, C. H., Guo, J. C., Chen, S. Y. and Yeh, L. S. 2006. "A 10-Year Review of Autopsy of Rescued Formosan Pangolin (Manis Pentadactyla Pentadactyla) in Taipei Zoo." Proceedings of AZWMP 2006.
3- Chin, J. S. C. and Tsao, E. H. 2015. "Pholidota." in Fowler's Zoo and Wild Animal Medicine, Volume 8, edited by Miller, E. and Fowler, M., Elsevier Saunders, pp. 369–74.
4- Khatri-Chhetri, R., Sun, C. M., Wu, H. Y. and Pei, K. J. C. 2015. "Reference intervals for hematology, serum biochemistry, and basic clinical findings in free-ranging Chinese Pangolin (Manis pentadactyla) from Taiwan." Veterinary Clinical Pathology, 44 (3), pp. 380-390.

AKNOWLEDGEMENTS
The authors would like to thank Jessica Jimerson and Save Vietnam's Wildlife for sharing their expertise with us and to Eve Mansfield, George Sullivan and Jeremy Phan for all the support provided during the clinical case's development.

ການນຳສະເໜີແບບໂປສເຕີຄັ້ງທຳອິດຂອງ ມູນນິທິ ອະນຸລັກ ສັດປ່າ ລາວ

Marta Pereira ອະດີດສັດຕະວະແພດຂອງ ມູນນິທິ ອະນຸລັກ ສັດປ່າ ລາວ ໄດ້ນຳສະເໜີກ່ຽວກັບລີ່ນງົວພິເສດໂຕໜຶ່ງທີ່ພວກເຮົາໄດ້ກູ້ໄພມາ ເຊິ່ງພວກເຮົາສົງໄສວ່າມັນອາດເປັນພະຍາດແມ່ກາຝາກ ແລະ ມີບາດແຜໃນກະເພາະລຳໄສ້. ສຸຂະພາບຂອງສັດໂຕນີ້ກາຍເປັນສິ່ງສຳຄັນຫຼາຍ ແລະ ສັດຕະວະແພດຂອງພວກເຮົາກໍ່ໄດ້ເຮັດວຽກຢ່າງບໍ່ຢຸດຢັ້ງ ເພື່ອຊ່ວຍຊີວິດຂອງມັນ ແລະ ສຸດທ້າຍກໍ່ປະສົບຄວາມສຳເລັດ! ເນື່ອງຈາກວ່າພວກເຮົາເປັນສູນກູ້ໄພ, ບຳບັດຟື້ນຟູ ແລະ ປ່ອຍສັດປ່າຫຼາກຫຼາຍຊະນິດທີ່ບໍ່ຄ່ອຍມີໃຜຮູ້ຈັກຂໍ້ມູນທີ່ພວກເຮົາລວບລວມໄດ້ວ່າມີຄຸນຄ່າສູງຕໍ່ກັບຊຸມຊົນການອະນຸລັກ, ສັດຕະວະແພດ ແລະ ສັດຕະວິທະຍາຢ່າງກວ້າງຂວາງ. ພວກເຮົາຫວັງວ່າຈະມີໂອກາດໃນການຄົ້ນຄວ້າເພີ່ມເຕີມ ເພື່ອຊ່ວຍເຫຼືອຊຸມຊົນວິທະຍາສາດ.

ຕ້ານ
ອາຊະຍາກຳສັດປ່າ

ສະຖິຕິການລາຍງານອາຊະຍາກຳສັດປ່າ

ປີນີ້ເປັນປີທຳອິດທີ່ພວກເຮົາໄດ້ເກັບກຳຂໍ້ມູນຕໍ່ໄປນີ້ໃສ່ຖານຂໍ້ມູນ ເພື່ອຊ່ວຍໃຫ້ພວກເຮົາສາມາດເບິ່ງເຫັນໄດ້ຢ່າງງ່າຍດາຍເຖິງປະສິດທິພາບໃນການນຳໃຊ້ຮູບແບບຕ່າງໆທີ່ສົ່ງຜົນກະທົບຕໍ່ການຄ້າສັດປ່າທີ່ຜິດກົດໝາຍ.



ຮັບລາຍງານ: ເມື່ອມີບຸກຄົນໃດໜຶ່ງແຈ້ງເບາະແສສັດປ່າໃຫ້ພວກເຮົາ ບໍ່ວ່າ (ຕາຍ ຫຼື ຍັງມີຊີວິດ) ຫຼື ຊິ້ນສ່ວນສັດປ່າທີ່ຖືກຈຳໜ່າຍ ຫຼື ເກັບໄວ້ຢ່າງຜິດກົດໝາຍ.
ຍຶດ: ເມື່ອເຈົ້າໜ້າທີ່ຍຶດໄດ້ສັດ/ບໍ່ວ່າຈະເປັນການຮັບລາຍງານຈາກພວກເຮົາ ຫຼື ໄປຍຶດດ້ວຍຕົວພວກເຂົາເອງ.
ບໍລິຈາກ: ເມື່ອມີບຸກຄົນໃດໜຶ່ງນຳເອົາສັດມາມອບໃຫ້ສູນ. ອາດເປັນສັດທີ່ເຂົາເຈົ້າລ້ຽງມາດົນແລ້ວ ຫຼື ສັດທີ່ເຂົາເຈົ້າຊື້ມາຈາກຕະຫຼາດ
ປ່ອຍ: ສັດຈຳພວກນີ້ແມ່ນສັດທີ່ໄດ້ຜ່ານຂັ້ນຕອນການບຳບັດຟື້ນຟູຂອງພວກເຮົາ ແລະ ຈຶ່ງຖືກປ່ອຍກັບຄືນສູ່ປ່າ.

ການປະຕິບັດງານຂອງເຈົ້າໜ້າທີ່ລັດຖະບານ

ບໍ່ສາມາດແຈ້ງໄດ້ທຸກການລາຍງານສັດປ່າໃຫ້ເຈົ້າໜ້າທີ່ລັດຖະບານ ຍ້ອນວ່າໂດຍປົກກະຕິແລ້ວບໍ່ມີຂໍ້ມູນຢ່າງພຽງພໍ. ສະນັ້ນ, ຂໍ້ມູນນີ້ແມ່ນອີງຕາມການລາຍງານທີ່ມູນນິທິ ອະນຸລັກ ສັດປ່າ ລາວ ໄດ້ແຈ້ງໂດຍກົງໃຫ້ເຈົ້າໜ້າທີ່ລັດຖະບານ.



ຕ້ານ
ອາຊະຍາກໍາສັດປ່າ

- *ການຮ່ວມມືລະຫວ່າງ EU ແລະ WCS ພາຍໃຕ້ຫົວຂໍ້ "ຄູ່ຮ່ວມງານ ເພື່ອຕ້ານອາຊະຍາກໍາສັດປ່າ"*

Partners Against Wildlife Crime

ໃນປີນີ້ພວກເຮົາສາມາດສ້າງຄວາມກ້າວໜ້າໄດ້ຢ່າງດີເລີດດ້ວຍການຮ່ວມມືກັບສະຫະພາບເອີຣົບ ແລະ ອົງການ WCS, "ທໍາລາຍຕ່ອງໂສ້ການຄ້າຂາຍສັດປ່າທີ່ຜິດກົດໝາຍໃນອາຊີ ໂດຍການໃຊ້ອິດທິພົນຈາກການຮ່ວມມືຂອງປະຊາຄົມເພື່ອເພີ່ມທະວີປະສິດທິພາບໃນການປະຕິບັດງານຂອງເຈົ້າໜ້າທີ່ລັດຖະບານ"

Facebook



ພວກເຮົາມີຜູ້ຕິດຕາມໃນ Facebook ຫຼາຍກວ່າ 16,000 ຄົນ ເຊິ່ງ 50% ຂອງຜູ້ຕິດຕາມດັ່ງກ່າວແມ່ນເປັນຄົນລາວ! ສິ່ງດັ່ງກ່າວນີ້ເຮັດໃຫ້ພວກເຮົາໄດ້ຮັບການລາຍງານສັດປ່າຢ່າງຫຼວງຫຼາຍຈາກປະຊາຊົນລາວ ແລະ ສະແດງໃຫ້ເຫັນວ່າຈໍານວນຜູ້ສະໜັບສະໜູນພວກເຮົານັ້ນແມ່ນຄົນລາວເຮົາ.

ພວກເຮົາສາມາດປັບປຸງສາຍດ່ວນກູ້ໄພສັດປ່າຕະຫຼອດ 24 ຊົ່ວໂມງຂອງພວກເຮົາໄດ້ ໂດຍການເຮັດໃຫ້ເປັນ 4 ຕົວເລກ ແລະ ໂທດ້ວຍເບີໂທລະສັບລາວບໍ່ໄດ້ເສຍຄ່າ. ທີມງານຂອງພວກເຮົາຍັງໄດ້ອອກແບບປ້າຍໂຄສະນາຈໍານວນ 3 ປ້າຍ ເພື່ອຊ່ວຍເຜີຍແຜ່ຂໍ້ມູນກ່ຽວກັບໝາຍເລກສາຍດ່ວນຂອງພວກເຮົາ ໃຫ້ປະຊາຊົນລາວມີສ່ວນຮ່ວມໃນທົ່ວປະເທດ. ເບິ່ງປ້າຍໂຄສະນາໄດ້ໃນເພຈ໌ຕໍ່ໄປນີ້!

ສູນສັດປ່າ

ການຮ່ວມມືລະຫວ່າງ EU ແລະ WCS ພາຍໃຕ້ຫົວຂໍ້ "ຄູ່ຮ່ວມງານ ເພື່ອຕ້ານອາຊະຍາກຳສັດປ່າ"

ສູນສັດປ່າ

ການຮ່ວມມືລະຫວ່າງ EU ແລະ WCS ພາຍໃຕ້ຫົວຂໍ້ "ຄູ່ຮ່ວມງານ ເພື່ອຕ້ານອາຊະຍາກຳສັດປ່າ"

ສູນສັດປ່າ

ການຮ່ວມມືລະຫວ່າງ EU ແລະ WCS ພາຍໃຕ້ຫົວຂໍ້ "ຄູ່ຮ່ວມງານ ເພື່ອຕ້ານອາຊະຍາກຳສັດປ່າ"

ຄາດຄະເນແຜນການເຮັດວຽກໃນປີ 2021

ໂຄງການ	ກຳນົດເວລາ
ກໍ່ສ້າງເກາະທະນີໃໝ່ໃຫ້ສຳເລັດ	ເດືອນກຸມພາ
ກໍ່ສ້າງຄອກ P13/P14 ຄອກທະນີ ໃຫ້ສຳເລັດ	ເດືອນມີນາ-ເມສາ
ການປັບປຸງຄັ້ງຍິ່ງໃຫຍ່ຂອງ ມູນນິທິ ອະນຸລັກ ສັດປ່າ ລາວ - ຫໍພິພິດທະພັນທຳມະຊາດວິທະຍາ - ສູນສຶກສາການຄ້າສັດປ່າທີ່ຜິດກົດໝາຍ - ຮ້ານຂາຍເຄື່ອງທີ່ລະນຶກ/ຫໍພິພິດທະພັນສວນສັດລາວ - ປັບປຸງບາງສະຖານທີ່ຢູ່ໃນສູນ	ເດືອນມີນາ-ກັນຍາ
ຈັດການຝຶກອົບຮົມໃຫ້ເຈົ້າໜ້າທີ່ກົມກວດກາປ່າໄມ້ ແລະ ກອງກວດກາປ່າໄມ້ - 6 ແຂວງ	ເດືອນເມສາ-ທັນວາ
P15/P16 ຄອກທະນີ	ເດືອນພຶດສະພາ-ມິຖຸນາ
ເປີດຄືນ ມູນນິທິ ອະນຸລັກ ສັດປ່າ ລາວ - ຈັດເປັນທົວພື້ນຖານໃຫ້ແຂກທຸກຄົນ - ຄົນລາວເຂົ້າຟຣີ - ຄົນຕ່າງປະເທດເສຍຄ່າຜ່ານປະຕູໜ້ອຍດຽວ	ເລີ່ມເດືອນຕຸລາ-ເປັນຕົ້ນໄປ
ໂຄງການສອນຢູ່ທີ່ໂຮງຮຽນມັດທະຍົມຕອນຕົ້ນ ບ້ານ ບໍ	ສືບຕໍ່ເນື່ອງ
ກູ້ໄພ, ບຳບັດຟື້ນຟູ ແລະ ປ່ອຍຄືນສູ່ປ່າ	ສືບຕໍ່ເນື່ອງ
ຕິດຕັ້ງປ້າຍໂຄສະນາ	ສືບຕໍ່ເນື່ອງ

ຜູ້ໃຫ້ທຶນ ແລະ ຄູ່ຮ່ວມງານຂອງພວກເຮົາ

ຂໍຂອບໃຈບັນດາຜູ້ໃຫ້ທຶນ ແລະ ຄູ່ຮ່ວມງານທຸກຄົນທີ່ໄດ້ໃຫ້ການສະໜັບສະໜູນພວກເຮົາໃນປີ 2020.

ພວກເຮົາຂໍສະແດງຄວາມຂອບໃຈເປັນພິເສດມາຍັງ NCX Honda ທີ່ໄດ້ໃຫ້ການສະໜັບສະໜູນພວກເຮົາຈາກການກໍ່ຕັ້ງໃນປີ 2018.

ເນື່ອງຈາກ NCX Honda ເປັນຜູ້ສະໜັບສະໜູນທຶນຕົ້ນຕໍຂອງພວກເຮົາ ຈຶ່ງເຮັດໃຫ້ພວກເຮົາມີຄວາມເຂັ້ມແຂງໃນໄລຍະໜຶ່ງປີ ທີ່ມີຫຼາຍອົງການຈັດຕັ້ງທີ່ຄ້າຍຄືກັນກັບສູນຂອງພວກເຮົາໄດ້ພົບກັບຄວາມຫຍຸ້ງຍາກໃນການຮັກສາຈຳນວນພະນັກງານ, ການປະຕິບັດງານ, ເບິ່ງແຍງລ້ຽງດູສັດ ຫຼື ເຮັດວຽກທີ່ຈຳເປັນໃນການກູ້ໄພ, ບຳບັດຟື້ນຟູ ແລະ ປ່ອຍສັດປ່າ.

ດັ່ງນັ້ນ, ໃນນາມພະນັກງານ 60 ກວ່າຄົນ, ສັດປ່າ 400 ໂຕທີ່ຢູ່ໃນສູນ ແລະ ສັດປ່າຈຳນວນນັບບໍ່ຖ້ວນທີ່ພວກເຮົາໄດ້ຊ່ວຍເຫຼືອຊີວິດມາຈາກການຄ້າສັດປ່າທີ່ຜິດກົດໝາຍ ພວກເຮົາຂໍຂອບໃຈທ່ານທີ່ໄດ້ໃຫ້ການສະໜັບສະໜູນພວກເຮົາມາໂດຍຕະຫຼອດໃນປີ2020 ແລະ ຫຼາຍປີໃນຕໍ່ໜ້າ.

ຊ່ວຍຊີວິດສັດປ່າມື້ນີ້!

ອາສາສະໝັກກັບພວກເຮົາ!

ໃນຂະນະທີ່ໂລກເລີ່ມຄ່ອຍໆກັບຄືນສູ່ສະພາບປົກກະຕິແລ້ວ ສະນັ້ນ, ປັດຈຸບັນນີ້ຈຶ່ງເປັນຊ່ວງເວລາທີ່ເໝາະສົມທີ່ສຸດໃນການວາງແຜນວັນພັກອະນາຄົດຂອງທ່ານ! ເປັນຫຍັງບໍ່ເຮັດບາງສິ່ງບາງຢ່າງໃຫ້ມີຄວາມໝາຍ ແລະ ເຂົ້າມາໃນສູນຂອງພວກເຮົາ ເພື່ອຊ່ວຍເບິ່ງແຍງສັດທີ່ມີເອກະລັກທີ່ສຸດຂອງໂລກ ພ້ອມທັງມ່ວນຊື່ນໄປກັບວັດທະນະທຳລາວ ແລະ ຮູ້ວ່າເງິນຂອງທ່ານກຳລັງຊ່ວຍສະໜັບສະໜູນວຽກງານທີ່ສຳຄັນທີ່ສຸດ!

ສຳລັບຂໍ້ມູນເພີ່ມເຕີມ ພຽງແຕ່ສົ່ງອີເມວຫາພວກເຮົາໄດ້ທີ່ volunteer@lctwildlife.org ຫຼື ເຂົ້າໄປເບິ່ງຂໍ້ມູນເພີ່ມເຕີມໃນເວັບໄຊທ໌ຂອງພວກເຮົາ.

ບໍລິຈາກ!

ມັນເປັນໄປບໍ່ໄດ້ສະເໝີທີ່ຈະໃຫ້ຄົນເດີນທາງໄປທົ່ວໂລກ ເພື່ອສ້າງຄວາມແຕກຕ່າງ ແຕ່ກໍ່ສຳຄັນທີ່ທ່ານເຮັດສິ່ງທີ່ທ່ານສາມາດເຮັດໄດ້ຢູ່ເຮືອນ!

ຖ້າສິ່ງດັ່ງກ່າວນັ້ນໝາຍຄວາມວ່າທ່ານຕ້ອງການບໍລິຈາກເງິນ, ບໍລິຈາກເຄື່ອງໃຊ້ທີ່ຈຳເປັນບາງຢ່າງ ຫຼື ຮ່ວມກັນຫາທຶນ ເພື່ອຊ່ວຍສະໜັບສະໜູນສັດປ່າລາວ ພວກເຮົາຍິນດີທີ່ຈະຊ່ວຍທ່ານໃນທຸກວິທີທາງທີ່ເປັນໄປໄດ້. ຖ້າທ່ານມີຄຳຖາມໃດກ່ຽວກັບການບໍລິຈາກ ຫຼື ການລະດົມທຶນ ກະລຸນາຢ່າລັງເກຽດສົ່ງອີເມວຫາພວກເຮົາໄດ້ທີ່ info@lctwildlife.org

ບອກຕໍ່ໆກັນໄປ!

ຂ່າວດີກໍ່ຄືເຖິງແມ່ນວ່າທ່ານຈະບໍ່ມີເງິນກໍ່ຕາມ ແຕ່ທ່ານຍັງສາມາດຊ່ວຍໄດ້ສູນ ແລະ ການອະນຸລັກສັດປ່າ!

ບາງວຽກງານທີ່ສຳຄັນທີ່ສຸດທີ່ທ່ານສາມາດເຮັດໄດ້ແມ່ນຊ່ວຍໃຫ້ການສຶກສາແກ່ຄອບຄົວ ແລະ ໝູ່ເພື່ອນຂອງທ່ານກ່ຽວກັບສະພາບການຂອງສັດປ່າ ແລະ ວິທີການອະນຸລັກພັນສັດປ່າ ແລະ ຖິ່ນທີ່ຢູ່ອາໄສຂອງພວກມັນດ້ວຍການເປັນຜູ້ບໍລິໂພກທີ່ສະຫຼາດ, ເປັນນັກທ່ອງທ່ຽວທີ່ມີຄວາມຮັບຜິດຊອບ, ຫຼຸດຜ່ອນການປ່ອຍກ໊າສຄາບອນໄດອອກໄຊ ແລະ ບໍ່ສົ່ງເສີມການຄ້າສັດປ່າທີ່ຜິດກົດໝາຍ! ຢ່າລັງເກຽດຊີ້ແຈງໃຫ້ພວກເຂົາເຂົ້າຫາເຟສບຸກຂອງພວກເຮົາ ເພື່ອຮຽນຮູ້ວິທີການຊ່ວຍອະນຸລັກສັດປ່າ.

ຂໍຂອບໃຈບັນດາຜູ້ສະໜັບສະໜູນ, ອາສາສະໝັກ, ຜູ້ໃຫ້ທຶນ, ພະນັກງານ, ເພື່ອນຮ່ວມງານ ອະນຸລັກສັດປ່າ ແລະ ຜູ້ທີ່ມີຈິດໃຈມັກຮັກສັດປ່າທີ່ໄດ້ຊ່ວຍພວກເຮົາອະນຸລັກພັນສັດປ່າທີ່ມີເອກະລັກຂອງລາວເຮົາໃນທຸກໆວັນ.

ພວກເຮົາອາດບໍ່ສາມາດສຳເລັດວຽກງານອະນຸລັກນີ້ໄດ້ ຖ້າປາດສະຈາກທ່ານແລ້ວ!

ເບີໂທລະສັບຫ້ອງການ: +856 20 55 537 837

ທີ່ຢູ່ທາງໄປສະນີ: ມູນນິທິ ອະນຸລັກ ສັດປ່າ ລາວ
149 ຖະໜົນ ສຸພານຸວົງ, ບ້ານ ວັດໄຕທົ່ງ, ເມືອງ ສີໂຄດຕະບອງ,
ນະຄອນຫຼວງວຽງຈັນ, ສປປ ລາວ

ທີ່ຢູ່ສູນ: ມູນນິທິ ອະນຸລັກ ສັດປ່າ ລາວ
ບ້ານ ນາໝາກ, ເມືອງ ທຸລະຄົມ, ແຂວງ ວຽງຈັນ, ສປປ ລາວ